*ເຈັ້ຍຂໍ້ມູນກ່ຽວກັບພະຍາດຕິດຕໍ່*

# ໂຣກໝາກເບີດ

***ໂຣກໝາກເບີດແມ່ນພະຍາດຕິດຕໍ່ ຊຶ່ງ ເກີດຂຶ້ນຍ້ອນການຕິດເຊື້ອໄວຣັສ ແລະມັກ ເປັນໃນກຸ່ມເດັກນ້ອຍນັກຮຽນ. ການສັກຢາ ວັກຊີນ MMR ຈະຊ່ວຍປ້ອງ ກັນ ພະຍາດ ນີ້. ຄົນທີ່ເປັນໂຣກໝາກເບີດ ຕ້ອງຢູ່ຫ່າງ ໄກຈາກຄົນອື່ນເປັນເວລາ ເກົ້າມື້ຫຼັງຈາກ ທີ່ອາການໃຄ່ປາກົດຂຶ້ນ.***

## ໂຣກໝາກເບີດແມ່ນຫຍັງ?

ໂຣກໝາກເບີດແມ່ນພະຍາດຕິດຕໍ່ຊະນິດນຶ່ງຊຶ່ງເກີດຂຶ້ນຍ້ອນເຊື້ອໄວຣັສໝາກເບີດ. ທີ່ຜ່ານມາ, ໂຣກໝາກເບີດແມ່ນ ເປັນກັນ ແຜ່ຫຼາຍໃນກຸ່ມພວກເດັກນ້ອຍ. ເນື່ອງຈາກວ່າດຽວນີ້ໄດ້ມີການສັກຢາ ປ້ອງກັນແລ້ວ, ໂຣກໝາກເບີດໄດ້ກາຍພະຍາດ ທີ່ຄົນບໍ່ຄ່ອຍ ເປັນອີກແລ້ວໃນອອສເຕຣເລັຍ.

## ໂຣກນີ້ມີອາການຫຍັງແດ່?

- ອາການທົ່ວໆໄປຂອງໂຣກໝາກເບີດແມ່ນ ເປັນໄຂ້, ກິນເຂົ້າບໍ່ແຊບ, ເມື່ອຍອ່ອນເພັຍແລະເຈັບຫົວ ຕາມມາດ້ວຍການໃຄ່ແລະເຈັບ ຂອງຕ່ອມນ້ຳລາຍ. ຕ່ອມນ້ຳລາຍໃຕ້ຫູ ຕ່ອມນຶ່ງຫຼື ທັງສອງຕ່ອມ (ຊຶ່ງຢູ່ລະຫວ່າງແກ້ມ, ໃກ້ກັບຄາງກະໄຕ, ຢູ່ກ້ອງຫູ) ເປັນພາກສ່ວນທີ່ມັກເປັນຫຼາຍທີ່ສຸດ.
- ປະມານນຶ່ງສ່ວນສາມຂອງຄົນຕິດເຊື້ອນີ້ຈະບໍ່ມີອາການຫຍັງໝົດ.
- ຕາມປົກກະຕິ ໂຣກໝາກເບີດຈະກາຍເປັນພະຍາດຮ້າຍແຮງເມື່ອເປັນກັບຄົນຫຼັງອາຍຸວັຍລຸ້ນແລ້ວ.
- ອາການແຊກຊ້ອນຂອງໂຣກໝາກເບີດແມ່ນບໍ່ຄ່ອຍມີ ແຕ່ກໍອາດຮວມມີອາການຕ່າງໆເຊັ່ນ ການອັກເສບຂອງສມອງ (encephalitis), ການອັກເສບຂອງເນື້ອເຍື່ອຫຸ້ມສມອງແລະໄຂສັນຫຼັງ (meningitis), ລູກອັນທະອັກເສບ (orchitis), ຮວຍໄຂ່ອັກເສບ (oophoritis), ເຕົ້ານົມອັກເສບ (mastitis), ຫູລູກ ແລະ ຫູໜວກ. ການເປັນໝັນ (ບໍ່ສາມາດມີລູກໄດ້) ໃນຜູ້ຊາຍນັ້ນເປັນໄດ້ ແຕ່ມີເປີເຊັນນ້ອຍທີ່ສຸດ.

## ໂຣກນີ້ແຜ່ພາຍໄດ້ຢ່າງໃດ?

- ໂຣກໝາກເບີດແຜ່ພາຍໃຫ້ກັນເມື່ອຄົນຜູ້ນຶ່ງຫາຍໃຈເອົາເຊື້ອໄວຣັສທີ່ຄົນອື່ນຊຶ່ງມີເຊື້ອນີ້ໄອຫຼືຈາມອອກມາ. ໂຣກໝາກເບີດສາມາດແຜ່ພາຍຈາກຄົນຕໍ່ຄົນໂດຍການຕ້ອງຊູນກັນໂດຍຕົງ ຫຼືຈາກນໍ້າລາຍທີ່ມີເຊື້ອ.
- ຄົນທີ່ໂຣກໝາກເບີດສາມາດມີເຊື້ອຢູ່ໃນຕົວເຈັດມື້ກ່ອນແລະເກົ້າມື້ຫຼັງຈາກທີ່ຕ່ອມນໍ້າລາຍເລີ້ມໃຄ່ຂຶ້ນ. ການຕິດເຊື້ອຢ່າງ ສູງສຸດແມ່ນຢູ່ໃນລະຫວ່າງ 2 ມື້ກ່ອນແລະ 4 ມື້ຫຼັງຈາກອາການເລີ້ມປາກົດ
- ລະຍະເວລາຊ່ວງຫວ່າງເລີ້ມຈາກການໄດ້ຮັບເຊື້ອໄວຣັສແລະເລີ້ມເຈັບປ່ວຍແມ່ນຕົກຢູ່ລະຫວ່າງ 12 ຫາ 25 ມື້ ແຕ່ວ່າສ່ວນຫຼາຍຈະແມ່ນລະຫວ່າງ 16 ຫາ 18 ມື້.

## ແມ່ນໃຜແດ່ທີ່ສ່ຽງຕໍ່ການຕິດໂຣກນີ້?

ທຸກໆຄົນທີ່ມີການພົວພັນກັບເຊື້ອໂຣກໝາກເບີດ ກໍສາມາດເປັນໂຣກໝາກເບີດໄດ້, ນອກຈາກວ່າເຂົາເຈົ້າເຄີຍເປັນ ໂຣກນີ້ມາກ່ອນ ຫຼືໄດ້ສັກຢາປ້ອງກັນ.

## ຈະປ້ອງກັນໂຣກນີ້ໄດ້ຢ່າງໃດ?

- ຄົນທີ່ເປັນໂຣກໝາກເບີດຄວນຢູ່ເຮືອນເປັນເວລາເກົ້າມື້ຫຼັງຈາກອາການໃຄ່ປາກົດຂຶ້ນເພື່ອຊ່ວຍບໍ່ໃຫ້ເຊື້ອໂຣກ ແຜ່ພາຍ ໄປຫາຄົນອື່ນ.
- ຢາສັກວັກຊີນ MMR ປ້ອງກັນໂຣກໝາກເບີດ, ໂຣກຫັດ ແລະ ໂຣກຣູແບລລ່າໄດ້ ແລະ ຢາວັກຊີນຊນິດນີ້ກໍແມ່ນສ່ວນນຶ່ງ ຂອງລາຍການສັກຢາກັນໂຣກທົ່ວໆໄປ ທີ່ສັກໃຫ້ເດັກອາຍຸເມື່ອອາຍຸໄດ້ 12 ເດືອນແລະອີກຄັ້ງນຶ່ງເມື່ອອາຍຸໄດ້ ສີ່ປີ.
- ຄົນທີ່ເກີດຫຼັງຈາກ ປີ 1965 ຕ້ອງໄດ້ໝັ້ນໃຈວ່າຕົນໄດ້ສັກຢາວັກຊີນ MMR ເປັນຈຳນວນສອງຄັ້ງ.

## ຈະກວດຫາໂຣກນີ້ໄດ້ຢ່າງໃດ?

ຕາມປົກກະຕິ ທ່ານໝໍຈະກວດຫາພະຍາດນີ້ໄດ້ ໂດຍພຽງແຕ່ອີງໃສ່ອາການແລະສິ່ງທີ່ສໍ່ສະແດງໃຫ້ເຫັນເທົ່ານັ້ນ. ການກວດເລືອດ ແລະການວິຈັຍຕົວຢ່າງ ທີ່ເອົາຈາກຮູຄໍ, ປັດສະວະຫຼືນໍ້າຈາກໄຂສັນຫຼັງສາມາດຢັ້ງຢືນການກວດຫາພະຍາດໄດ້.

## ຈະປິ່ນປົວໂຣກນີ້ໄດ້ຢ່າງໃດ?

ບໍ່ມີການປິ່ນປົວຈຳເພາະສຳລັບໂຣກໝາກເບີດ. ຢາແກ້ປວດທັມມະດາກໍອາດຊ່ວຍບັນເທົາອາການປວດແລະລົດໄຂ້ໄດ້. ການເອົາຖົງອຸ່ນຫຼືຖົງເຢັນແປະໃສ່ບ່ອນໃຄ່ກໍອາດຊ່ວຍບັນເທົາໄດ້ເຊັ່ນກັນ.

## ພະແນກສາທາລະນະສຸກມີທ່າທີຢ່າງໃດຕໍ່ໂຣກນີ້?

- ຫ້ອງທົດລອງ, ຄຣູໃຫຍ່ ແລະ ຜູ້ອຳນວຍການສູນດູແລເດັກຕ້ອງລາຍງານທຸກໆກໍຣະນີຂອງ ໂຣກໝາກເບີດຕໍ່ພະແນກສາທາ ຣະນະສຸກທ້ອງຖິ່ນ. ລາຍງານດັ່ງກ່າວຈະປ້ອນຂໍ້ມູນສະຖິຕິເພື່ອ ຊ່ວຍໃຫ້ເຂົ້າໃຈແນວໂນ້ມຂອງໂຣກ ໝາກເບີດໃນ ຊຸມຊົນ.
- ຄົນທີ່ເປັນໂຣກໝາກເບີດຄວນຢູ່ຫ່າງຈາກສູນດູແລເດັກ, ໂຮງຮຽນແລະບ່ອນເຮັດການເປັນ ເວລາ ເກົ້າມື້ຫຼັງຈາກອາການໃຄ່ປາກົດຂຶ້ນ.

## ຣາຍລະອຽດເພີ້ມເຕີມ - ພະແນກສາທາຣະນະສຸກແຫ່ງຣັດ NSW



**1300 066 055**

**www.health.nsw.gov.au**